ເຖິງຢ່າງໃດກໍຕາມ, ເມື່ອມູນຄ່າການຊື້-ຂາຍຕົວຈິງ ຫາກມີ ຂໍ້ສົງໄສ, ບໍ່ເປັນທີ່ຍອມຮັບໄດ້ ແລະ/ຫຼື ບໍ່ສາມາດ ກຳນົດໄດ້, ເນື່ອງຈາກວ່າ ລາຄາອາດໄດ້ມີການ ບິດເບືອນຈາກຄວາມເປັນຈິງ, ເຈົ້າໜ້າທີ່ພາສີມີສິດໃນ ການກຳນົດ ການແຈ້ງມູນຄ່າການເສຍພາສີທີ່ນອນໃນ 1-6 ວິທີ ພາຍໃຕ້ບົດແນະນຳສະບັບນີ້. ພ້ອມນັ້ນ, ໃນກໍລະນີຂໍ້ມູນການຊື້ຂາຍບໍ່ຈະແຈ້ງ, ເຈົ້າໜ້າທີ່ພາສີມີສິດຮຽກຮ້ອງເອົາຂໍ້ມູນການຊື້-ຂາຍເພີ່ມຕື່ມ ຈາກຜູ້ນຳເຂົ້າສິນຄ້າ, ແຕ່ຂໍ້ມູນທີ່ເຈົ້າໜ້າທີ່ພາສີຮຽກຮ້ອງເພີ່ມຕື່ມນັ້ນຕ້ອງເປັນຂໍ້ມູນທີ່ສົມເຫດສົມຜົນ ແລະ ມີກຳນົດເວລາ ອັນແນ່ນອນໃນການກວດສອບຂໍ້ມູນດັ່ງກ່າວ ເພື່ອຫຼີກລ່ຽງການສ້າງອຸປະສັກທີ່ບໍ່ຈຳເປັນຕໍ່ການຄ້າ.

**ຜົນປະໂຫຍດຂອງການປະຕິບັດບົດແນະນຳການກຳນົດມູນຄ່າແຈ້ງພາສີສິນຄ້ານຳເຂົ້າ:**

ສ້າງຄວາມແນ່ນອນໃຫ້ກັບພາກທຸລະກິດນຳເຂົ້າ; ຊຶ່ງຈະນຳໄປສູ່ການຂະຫຍາຍຕົວດ້ານການຄ້າ, ຜູ້ນຳເຂົ້າສາມາດນຳເຂົ້າສິນຄ້າໃນມູນຄ່າ ແລະ ເສຍພາສີຕາມລາຄາຊື້ຂາຍຕົວຈິງ ຊຶ່ງການນຳເຂົ້າສິນຄ້າຈາກແຫຼ່ງຜະລິດ ທີ່ມີລາຄາຖືກກໍ່ຈະເສຍພາສີໄດ້ຖືກກວ່າ ເຊິ່ງເປັນການສົ່ງເສີມຄວາມອາດສາມາດໃນການແຂ່ງຂັນຂອງທຸລະກິດການນຳເຂົ້າ.

ການຈັດຕັ້ງປະຕິບັດວິທີການກຳນົດມູນຄ່າແຈ້ງພາສີຂອງ ບົດແນະນຳສະບັບນີ້ ຈະເຮັດໃຫ້ຂະບວນການກຳນົດການແຈ້ງເສຍພາສີ ໂດຍເຈົ້າໜ້າທີ່ພາສີມີຄວາມໂປ່ງໃສ, ຈະແຈ້ງ ແລະ ສ້າງຄວາມແນ່ນອນໃຫ້ກັບທຸລະກິດນຳເຂົ້າ, ລາຍໄດ້ຂອງລັດຖະບານເພີ່ມຂຶ້ນ ເນື່ອງຈາກຖານພາສີທີ່ເພີ່ມຂຶ້ນ (ແຫຼ່ງລາຍຮັບດ້ານພາສີ).

**ສະພາບຂອງ ສປປ ລາວ ຕໍ່ກັບການແຈ້ງເສຍພາສີ**

ປະຈຸບັນ ສປປ ລາວ ໄດ້ລຶບລ້າງລາຄາອ້າງອີງຂອງ ສິນຄ້າປະເພດເຄື່ອງໃຊ້ສອຍທົ່ວໄປ ແລະ ຫັນມານຳໃຊ້ລາຄາຊື້-ຂາຍຕົວຈິງ ຊຶ່ງໄດ້ເລີ່ມຈັດຕັ້ງປະຕິບັດໃນວັນທີ 1 ສິງຫາ 2011 ເປັນຕົ້ນໄປ. ສະເພາະລາຍການສິນຄ້າປະເພດພາຫະນະ 2 ລໍ້, 4 ລໍ້, ລົດບັນທຸກ ແລະ ນ້ຳມັນເຊື້ອໄຟ ແມ່ນຈະໄດ້ລຶບລ້າງລາຄາກາງໃຫ້ສຳເລັດພາຍໃນປີ 2012.

**ສົນໃຈຂໍ້ມູນເພີ່ມເຕີມ**
ກົມນະໂຍບາຍການຄ້າຕ່າງປະເທດ
ກະຊວງອຸດສາຫະກຳ ແລະ ການຄ້າ
ກົມພາສີ, ກະຊວງການເງິນ
Tel/Fax: 021-450066
Email: foreigntrade@laoftpd.com
www.laoftpd.com

**ສະໜັບສະໜູນໂດຍ:**
USAID
FROM THE AMERICAN PEOPLE




# ບົດແນະນຳຂອງລັດຖະມົນຕີ ວ່າການກະຊວງການເງິນ ວ່າດ້ວຍການກຳນົດມູນຄ່າ ແຈ້ງພາສີ ສຳລັບສິນຄ້ານຳເຂົ້າ

## Instruction of the Minister of Finance on Customs valuation of Imported goods

WORLD TRADE ORGANIZATION

# ບົດແນະນຳວ່າດ້ວຍການກຳນົດມູນຄ່າແຈ້ງພາສີຂອງສິນຄ້ານຳເຂົ້າ

ແມ່ນບົດແນະນຳກ່ຽວກັບການກຳນົດບັນດາຫຼັກການ ແລະ ວິທີຈັດຕັ້ງປະຕິບັດຕາມມາດຕາ VII ຂອງສັນຍາທົ່ວໄປວ່າດ້ວຍພາສີ ແລະ ການຄ້າ (GATT) ມີວັດຖຸປະສົງຫຼັກ ເພື່ອສ້າງຄວາມເປັນເອກະພາບ, ຄວາມໂປ່ງໃສ ແລະ ຄວາມແນ່ນອນໃນການປະເມີນມູນຄ່າການແຈ້ງພາສີ ແນໃສ່ເພື່ອອຳນວຍຄວາມສະດວກໃຫ້ກັບພາກທຸລະກິດ ໃນການນຳເຂົ້າສິນຄ້າ ພ້ອມນັ້ນກໍເພື່ອເປັນການຫຼີກ ລ່ຽງການກຳນົດມູນຄ່າພາສີຕາມອຳເພີໃຈໂດຍເຈົ້າໜ້າທີ່ພາສີ.

## ການປະເມີນມູນຄ່າແຈ້ງພາສີແມ່ນຫຍັງ?

ການປະເມີນມູນຄ່າແຈ້ງພາສີ ແມ່ນຂະບວນການໃນການກຳນົດມູນຄ່າ ສິນຄ້າເພື່ອຄິດໄລ່ພາສີນຳເຂົ້າຂອງສິນຄ້າຕ່າງໆ ບໍ່ວ່າຈະເກັບແບບທຽບຖານ, ແບບເດັດຖານ ຫຼື ແບບປະສົມກັນໂດຍບົດແນະນຳການປະເມີນມູນ ຄ່າແຈ້ງ ພາສີ ຈະກຳນົດວິທີການຕ່າງໆ ທີ່ເຈົ້າໜ້າທີ່ພາສີຈະຕ້ອງໄດ້ປະຕິ ບັດຕາມ ໂດຍຫຼັກການຕົ້ນຕໍຂອງບົດແນະນຳແມ່ນໃຫ້ນຳໃຊ້ມູນຄ່າການຊື້-ຂາຍຕົວຈິງ (Transaction Value) ເປັນຫຼັກ.

## ເນື້ອໃນຂອງບົດແນະນຳໂດຍສັງເຂບ

ບົດແນະນຳການປະເມີນມູນຄ່າແຈ້ງເສຍພາສີ ແມ່ນກຳນົດວິທີການ ແລະ ຂັ້ນຕອນໃນການປະເມີນມູນຄ່າສິນຄ້ານຳເຂົ້າ ເພື່ອຮຽກເກັບພາສີ, ຊຶ່ງໂດຍຫຼັກການຕົ້ນຕໍແລ້ວ ແມ່ນໃຫ້ນຳໃຊ້ມູນຄ່າຊື້ - ຂາຍຕົວຈິງເປັນຫຼັກ ບົນພື້ນຖານຫຼັກການບໍ່ຈຳແນກປະຕິບັດລະຫ່ວາງຕົ້ນກຳເນີດຂອງສິນຄ້າ ຫຼື ປະເທດຜູ້ສົ່ງອອກ (Most-Favoured Nation), ນິຕິບຸກຄົນ/ບຸກຄົນພາຍໃນ ແລະ ຕ່າງປະເທດ (National Treatment). ບົດແນະນຳດັ່ງກ່າວ ໄດ້ກຳນົດ 06 ວິທີການຕາມລຳດັບໃນການປະເມີນມູນຄ່າອັດຕາພາສີ ຊຶ່ງເຈົ້າ ໜ້າທີ່ພາສີ ຈະຕ້ອງໄດ້ປະຕິບັດຕາມແຕ່ລະວິທີ ແລະ ຂັ້ນຕອນຕາມລຳດັບດັ່ງນີ້:

**1. ມູນຄ່າຊື້-ຂາຍສິນຄ້າ, ເຄື່ອງຂອງນຳເຂົ້າ (Transaction Value)**: ແມ່ນລາຄາລວມທີ່ຜູ້ຊື້ຈ່າຍໃຫ້ຜູ້ຂາຍຕໍ່ກັບສິນຄ້າທີ່ນຳເຂົ້າ ລວມທັງທຸກໆຄ່າໃຊ້ຈ່າຍທີ່ກ່ຽວພັນກັບການນຳເຂົ້າສິນຄ້າລະຫວ່າງຜູ້ຊື້ກັບຜູ້ຂາຍ ຫຼື ໂດຍຜູ້ຊື້ຕໍ່ກັບບຸກຄົນທີສາມ.

**2. ມູນຄ່າຊື້-ຂາຍສິນຄ້າ, ເຄື່ອງຂອງນຳເຂົ້າ ທີ່ຄືກັນທຸກປະການ (Transaction Value of Identical Goods):** ແມ່ນນຳໃຊ້ມູນຄ່າຂອງສິນຄ້າທີ່ມີຮູບແບບທີ່ຄືກັນທຸກປະການຄື: ສິນຄ້າທີ່ມີລັກສະນະຄືກັນໃນດ້ານຮູບຊົງ, ລັກສະນະ, ຄຸນນະພາບ ແລະ ຊື່ສຽງຂອງສິນຄ້າ. ຊຶ່ງການປະເມີນມູນຄ່າສິນຄ້າ ແມ່ນຈະປະເມີນ ຈາກສິນຄ້າທີ່ຜະລິດຈາກປະເທດດຽວກັນ ແລະ ປະເມີນຕົ້ນທຶນການ ຜະລິດທີ່ຜະລິດຈາກຜູ້ຜະລິດປະເພດດຽວກັນ, ຂັ້ນຕອນເຫຼົ່ານີ້ ແມ່ນຈະຖືກນຳໃຊ້ຕໍ່ກັບສິນຄ້າທີ່ມີລັກ ສະນະທີ່ຄືກັນທຸກປະການ.

**3. ມູນຄ່າຊື້-ຂາຍສິນຄ້າ, ເຄື່ອງຂອງນຳເຂົ້າທີ່ຄ້າຍກັນ (Transaction Value of Similar Goods)**: ແມ່ນການນຳໃຊ້ມູນຄ່າຂອງສິນຄ້າ ທີ່ມີລັກສະນະທີ່ຄ້າຍຄືກັນ ໂດຍອີງໃສ່ປັດໃຈຄຸນນະພາບຂອງສິນຄ້າ, ຊື່ສຽງ ແລະ ເຄື່ອງ ໝາຍການຄ້າທີ່ມີຢູ່.

**4.ການກຳນົດມູນຄ່າແຈ້ງພາສີດ້ວຍວິທີຫັກລົບມູນຄ່າ (Deductive method):** ເມື່ອສິນຄ້ານຳເຂົ້າບໍ່ສາມາດກຳນົດພາຍໃຕ້ວິທີ 01, 02 ແລະ 03 ໄດ້ ໜ່ວຍງານພາສີ ຈະນຳໃຊ້ ວິທີການ ຫັກລົບມູນຄ່າ ໂດຍ ອີງໃສ່ ສິນຄ້າທີ່ຄືກັນ ຫຼື ຄ້າຍກັນ ທີ່ນຳເຂົ້າມາໃນ ສປປ ລາວ ໂດຍ ຫັກລົບຄ່າໃຊ້ຈ່າຍທັງໝົດທີ່ເກີດຂຶ້ນຫຼັງຈາກການນຳເຂົ້າເພື່ອມາ ສົມທຽບມູນຄ່າກັບສິນຄ້າທີ່ກຳລັງປະເມີນ. ຖ້າຫາກຜູ້ນຳເຂົ້າ ຮ້ອງຂໍ ວິທີ ການກຳນົດມູນຄ່າພາສີລະຫວ່າງ ຂໍ້4 ກັບ ຂໍ້5 ສາມາດນຳໃຊ້ສະ ຫຼັບກັນໄດ້

**5. ວິທີຄຳນວນ (Compute value):**
ເມື່ອສິນຄ້ານຳເຂົ້າບໍ່ສາມາດກຳນົດຕາມ ຂໍ້4 ໜ່ວຍງານ ພາສີ ຈະນຳໃຊ້ວິທີຄຳນວນ ໂດຍອີງໃສ່ ຜົນ ບວກຄ່າໃຊ້ຈ່າຍທັງໝົດ ຂອງ ສິນຄ້າທີ່ຄືກັນ ຫຼື ຄ້າຍ ກັນຈາກ ແຫຼ່ງຜະລິດສິນຄ້າ ຈົນຮອດ ດ່ານ ພາສີ ຂອງ ສປປ ລາວ ເພື່ອ ມາສົມທຽບກັບສິນສິນຄ້າ ທີ່ກຳລັງປະ ເມີນຢູ່

**6. ວິທີການກຳນົດມູນຄ່າແຈ້ງພາສີດ້ວຍ ວິທີຍ້ອນຄືນທີ່ສົມເຫດສົມຜົນ 1-6 (Fall back method):** ຂັ້ນຕອນນີ້ແມ່ນການເລືອກເອົາວິທີໃດໜຶ່ງ ລະຫວາງ 1-6 ເພື່ອນຳໃຊ້ເຂົ້າໃນ ການປະເມີນມູນຄ່າພາສີສິນຄ້າ ນຳເຂົ້າ.